# ພິທີມອບໃບຢັ້ງຢືນ 4 ບຸກ ແລະ ເປີດຂະບວນແຂ່ງຂັນ 4 ບຸກ ປີທີ V
# ຂອງໜ່ວຍຮາກຖານຊາວໜຸ່ມ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ

ເພື່ອເປັນການຈັດຕັ້ງປະຕິບັດຕາມແຈ້ງການແນະນຳຈາກສູນກາງ ຊປປ ລາວ ສະບັບເລກທີ 096/ລຂ, ລົງວັນທີ 22 ກຸມພາ 2012 ວ່າດ້ວຍການຈັດຕັ້ງຂໍ້ແຂ່ງຂັນ 4 ບຸກ ດັ່ງນັ້ນໃນຕອນບ່າຍຂອງວັນທີ 13 ກໍລະກົດ 2018 ນີ້ໜ່ວຍຮາກຖານຊາວໜຸ່ມສາຂາ ທະນາຄານແຫ່ງສປປ ລາວ ພາກເໜືອແຂວງອຸດົມໄຊ ກໍ່ໄດ້ຈັດພິທີ ມອບ-ຮັບ ໃບຢັ້ງຢືນເປັນໜ່ວຍ 4 ບຸກ ໃນສົກປີ 2017 ພ້ອມທັງເປີດຂະບວນແຂ່ງຂັນ 4 ບຸກ ປະຈຳປີ 2018 ຂຶ້ນຢ່າງເປັນທາງການຢູ່ທີ່ຫ້ອງປະຊຸມຊັ້ນ IV ຂອງສາຂາ ທຫລ.ອຊ



ໂດຍການເປັນປະທານຂອງສະຫາຍ ອານຸສັກ ພົງສະຫັວດ ເລຂາໜ່ວຍຮາກຖານຊາວໜຸ່ມສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງ ອຸດົມໄຊເຂົ້າຮ່ວມໃນພິທີມີສະຫາຍ ບຸນທັນ ສຸລິຍະວົງ ກຳມະການ ສູນກາງຊາວໜຸ່ມປະຊາຊົນປະຕິວັດ ລາວ ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ອຸດົມໄຊ, ສະຫາຍ ບຸນໄທ ສຸພັດທອນ ເລຂາຄະນະພັກຮາກຖານ ຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ, ສະຫາຍ ສີສະເກດ ສີລາວົງສາ ຄະນະບໍລິຫານງານຊາວໜຸ່ມແຂວງ ຊີງເຂດທະນາຄານ ແລະ ມີບັນດາແຂກເຊີນຜູ້ຕາງໜ້າຄະນະໜ່ວຍຊາວໜຸ່ມຈາກພາກສ່ວນຕ່າງໆ ແລະ ສະມາຊິກຊາວໜຸ່ມພາຍໃນເຂົ້າຮ່ວມ 51 ສະຫາຍ, ຍິງ 24 ສະຫາຍ.

ໃນກອງປະຊຸມສະຫາຍ ອານຸສັກ ພົງສະຫັວດ ເລຂາໜ່ວຍຮາກຖານຊາວໜຸ່ມສາຂາ ທຫລ.ອຊ ໄດ້ຂຶ້ນຜ່ານບົດສະຫຼຸບການປະຕິບັດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2017 ແລະ ແຜນການປະຕິບັດຂໍ້ແຂ່ງ ລາຍງານການຈັດຕັ້ງປະຕິບັດວຽກງານ 4 ບຸກ ປະຈຳປີ 2018 ຜ່ານມາ ເຊິ່ງໜ່ວຍຮາກຖານຊາວໜຸ່ມສາຂາ ທຫລ.ອຊ ໄດ້ຈັດຕັ້ງປະຕິບັດສຳເລັດຫຼາຍວຽກ ໂດຍສະເພາະແມ່ນວຽກງານ 4 ບຸກ ກໍ່ຄືການນຳພາສະມາຊິກພາຍ ໃນໜ່ວຍບຸກທາງດ້ານການເມືອງແນວຄິດ, ບຸກທາງດ້ານການຝຶກຝົນຫຼໍ່ຫຼອມສຶກສາຮ່ຳຮຽນ, ບຸກທາງດ້ານການຈັດ ຕັ້ງ ແລະ ບຸກທາງດ້ານວິຊາອາຊີບສ້າງວຽກເຮັດງານທຳ.

ນອກຈາກນັ້ນສະມາຊິກພາຍໃນໜ່ວຍຍັງພ້ອມກັນເຂັ້ມແຂງຫ້າວຫັນຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ວຽກງານຂະບວນການ ແລະ ວຽກງານຂອງພັກ-ລັດ ກໍ່ຄືສັງຄົມຢ່າງຕັ້ງໜ້າ.

ຜ່ານການຈັດຕັ້ງປະຕິບັດການເຄື່ອນໄຫວຕາມແຜນການ 4 ບຸກໃນໄລຍະ 1 ປີນັ້ນໜ່ວຍຮາກຖານຊາວໜຸ່ມ ສາຂາ ທຫລ.ອຊ ຈຶ່ງສາມາດຍາດໄດ້ໜ່ວຍ 4 ບຸກ ເປັນປີທີ V ຈາກສູນກາງ ຊປປ ລາວ ແຂວງອຸດົມໄຊ ແລະ ຍັງສາມາດຕີລາຄາຈັດປະເພດໃຫ້ແກ່ສະມາຊິກພາຍໃນໜ່ວຍຕາມຜົນງານຕົວຈິງດັ່ງນີ້:






ປະເພດທີ 1 ໄດ້ຮັບໃບຍ້ອງຍໍ ຊປປລ ແຂວງອຸດົມໄຊ ຈຳນວນ 36 ສະຫາຍ, ຍິງ 17 ສະຫາຍ, ປະເພດ 2 ໄດ້ ຍ້ອງຍໍຈາກເລຂາໜ່ວຍພັກຮາກຖານ ຫົວໜ້າສາຂາ ທຫລ.ອຊ ຈຳນວນ 5 ສະຫາຍ, ຍິງ 2 ສະຫາຍ ແລະ ຄອບ ຄົວຕົວແບບ 7 ສະຫາຍ, ຍິງ 6 ສະຫາຍ, ໃຫ້ກຽດມອບໃບຢັ້ງຢືນ ແລະ ໃບຍ້ອງຍໍແມ່ນ ສະຫາຍ ບຸນທັນ ສຸລິຍະວົງ ກຳມະການສູນກາງ ຊປປລ ຄະນະບໍລິຫານງານຊາວໜຸ່ມແຂວງ, ສະຫາຍ ບຸນໄທ ສຸພັດທອນ ເລຂາ

ຄະນະພັກຣາກຖານສາຂາ ທຫລ.ອຊ ແລະ ສະຫາຍ ອານຸສັກ ພົງສະຫັວດ ເລຂາໜ່ວຍຣາກຖານຊາວໜຸ່ມສາຂາ ທຫລ.ອຊ ຈາກນັ້ນ ສະມາຊິກຊາວໜຸ່ມກໍ່ໄດ້ສ້າງຂະບວນການ ບານເຕະຟຸດຊ໌ ຍິງ-ຊາຍ ລະຫວ່າງຄະນະນຳຂັ້ນແຂວງ, ຄະນະນຳສາຂາ ທຫລ.ອຊ ຜູກແໜ້ນຄວາມສາມັກຄີ ແລະ ເພື່ອຕ້ອນຮັບວັນຄ້າຍວັນເກີດຂອງທ່ານປະທານ ສຸພານຸວົງ ຄົບຮອບ 109 ປີ, ວັນປ່ອຍປາ ແລະ ອານຸລັກສັດນ້ຳ-ສັດປ່າແຫ່ງຊາດ.




**ຂະບວນການ**



**ໂດຍ ນາງ ຄຳແພງ ສຸລິພົນ**